ເອກະສານຝຶກອົບຮົມ
ກ່ຽວກັບວຽກງານສາມສ້າງ

# ບົດທີ 14: ບົດແນະນຳເພີ້ມເຕີ່ມ ກ່ຽວກັບການຂໍອະນຸຍາດຂຸດຄົ້ນຫີນແຮ່, ຊາຍ ແລະດິນດຳຕາມແມ່ນ້ຳຂອງແລະແມ່ນ້ຳຕ່າງໆ ຢູ່ໃນ ສປປ ລາວ.

ສະເໜີໂດຍ: ກົມໂຍທາທິການທາງນ້ຳ, ກະຊວງ ຍທຂ

ນະຄອນຫລວງວຽງຈັ, ວັທີ 10 - 09 - 2014

## ສາລະບານ


I. ຄວາມເປັນມາ( ບ່ອນອີງ )

II. ຂໍ້ແນະນຳບາງມາດຕາ

III. ການປະກອບເອກະສານ

I. <u>ຄວາມເປັນມາ.</u>

- ອີງຕາມມາດຕາ 19 ຂອງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງ ຍທຂ ວ່າດ້ວຍ ລະບຽບການກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາຕາມແມ່ນໍ້າຂອງ ແລະ ແມ່ນໍ້າຕ່າງໆຢູ່ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ່ 7737/ຍທຂ ລົງວັນທີ່ 8/6/2010.
- ລະບຽບການດັ່ງກ່າວປະກອບມີ VII ໝວດ 20 ມາດຕາຄື:

ໝວດ ທີ I: ບົດບັນຍັດທົ່ວໄປ ມີ 4 ມາດຕາ.

ມາດຕາ 1. ຈຸດປະສົງ, ມາດຕາ 2. ຄວາມໝາຍຂອງສັບ.

ມາດຕາ 3. ການປະສານງານ, ການຄຸ້ມຄອງ ແລະ ການກວດກາ

ມາດຕາ 4. ການຈັດລະດັບຂອງການຂຸດຄົ້ນ.

ໝວດ ທີ II: ຫຼັກການ ແລະ ລະບຽບການລວມກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ ມີ 2 ມາດຕາ.

ມາດຕາ 5. ຫຼັກການລວມກ່ຽວກັບການຂຸດຄົ້ນ,ມາດຕາ 6. ລະບຽບການລວມກ່ຽວກັບການຂຸດຄົ້ນ.

ໝວດ ທີ III: ຂັ້ນຕອນການດໍາເນີນກ່ອນການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ ມີ 4 ມາດຕາ.

ມາດຕາ 7. ການກໍານົດຈຸດ ຫຼືຂອບເຂດພື້ນທີ່, ມາດຕາ 8. ການກວດ ແລະ ວິໃຈ ເພື່ອຊອກຫາແຮ່ທາດອື່ນ, ມາດຕາ 9. ການປະເມີນຜົນຕໍ່ສິ່ງແວດລ້ອມ, ມາດຕາ 10. ການອະນຸຍາດທາງດ້ານວິຊາການຂຸດຄົ້ນ.

ໝວດ ທີ IV: ການອອກໃບຢັ້ງຢືນ ແລະ ໃບອະນຸຍາດດ້ານຕ່າງໆກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ ມີ 4 ມາດຕາ.

ມາດຕາ 11. ການອອກໃບຢັ້ງຢືນກ່ຽວກັບອັດຕາສ່ວນເຈືອປົນຂອງແຮ່ທາດອື່ນ, ມາດຕາ 12. ການອອກໃບຢັ້ງຢືນທາງດ້ານສິ່ງແວດລ້ອມ, ມາດຕາ 13. ການອອກໃບອະນຸຍາດທາງດ້ານວິຊາການຂຸດຄົ້ນ, ມາດຕາ 14. ເງື່ອນໄຂຂອງຜູ້ປະກອບການທີ່ຈະໄດ້ຮັບອະນຸຍາດທາງດ້ານວິຊາການຂຸດຄົ້ນ.

ໝວດ ທີ V: ຂໍ້ຫ້າມ ມີ 2 ມາດຕາ.

ມາດຕາ 15. ຂໍ້ຫ້າມທົ່ວໄປ, ມາດຕາ 16. ຂໍ້ຫ້າມສໍາລັບຜູ້ທີ່ໄດ້ຮັບໃບອະນຸຍາດຂຸດຄົ້ນ.

ໝວດທີ VI: ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ມີ 2 ມາດຕາ.

ມາດຕາ 17. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ, ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ.

ໝວດທີ VII: ບົດບັນຍັດສຸດທ້າຍມີ 2 ມາດຕາ.

ມາດຕາ 19: ການຈັດຕັ້ງປະຕິບັດ, ມາດຕາ 20. ຜົນບັງຄັບໃຊ້.

- ຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 52/ນຍ,ລົງວັນທີ 10-06-2010 ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້.

- ບົດບັນທຶກມອບ-ໂອນວຽກງານຄຸ້ມຄອງການຂຸດຄົ້ນຫີນແຮ່,ຊາຍ ແລະ ດິນດໍາ ລະຫວ່າງ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງສະບັບລົງວັນທີ 10-11-2010.

## II. ຂໍ້ແນະນໍາບາງມາດຕາ.

### ມາດຕາ 3: ການປະສານງານ, ການຄຸ້ມຄອງ ແລະ ການກວດກາ

1. ການສໍາຫຼວດເກັບກໍາຂໍ້ມູນ (ຢູ່ໃນມາດຕາ 4 ຂອງລະບຽບການ)
   - ກົມໂຍທາທິການທາງນໍ້າ (ກຍນ), ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ-ນະຄອນຫຼວງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ
2. ການວິໄຈຫີນແຮ່, ຊາຍ ແລະ ດິນດໍາເພື່ອຊອກຫາອັດຕາສ່ວນເຈືອປົນຂອງແຮ່ທາດອື່ນ
   - ກົມທໍລະນີສາດ ໂດຍແມ່ນ ຂະແໜງ ໂຍທາທິການ ແລະ ຂົນສົ່ງເປັນເຈົ້າການປະສານງານ
3. ການກວດກາ
   - ການປະກອບເອກະສານໃຫ້ຖືກຕ້ອງຕາມລະບຽບການ, ກໍານົດແຜນການລົງຕິດຕາມກວດກາ, ສະຫຼຸບລາຍງານ

## ມາດຕາ 4: ການຈັດລະດັບຂອງການຂຸດຄົ້ນ

- ລະດັບ 1:
  ເປັນການຂຸດຄົ້ນຕາມປະເພນີຂອງປະຊາຊົນ.
- ລະດັບ 2:
  - ຂຸດຄົ້ນຂະໜາດກາງ ມີເນື້ອທີ່ນັບແຕ່ 5 ເຮັກຕາລົງມາ (ນ້ຳສາຂາ ຫຼືນ້ຳນ້ອຍ ບໍລິມາດ 50,000 ມ3);
  - ເອກະສານຂໍອະນຸຍາດໃຫ້ຜ່ານຫ້ອງການ ຍທຂ ເມືອງ ຫາ ພະແນກ ຍທຂ ແຂວງ/ນະຄອນຫຼວງ;
- ລະດັບ 3:
  - ການຂຸດຄົ້ນຂະໜາດໃຫຍ່ ເກີນ 5ເຮັກຕາຂຶ້ນໄປ;
  - ເອກະສານຂໍອະນຸຍາດໃຫ້ຜ່ານ ພະແນກ ຍທຂ ແຂວງ/ນະຄອນຫຼວງ ຫາ ກົມໂຍທາທິການທາງນ້ຳ;

## ມາດຕາ 5: ຫຼັກການລວມກ່ຽວກັບການຂຸດຄົ້ນຫີນແຮ່,ຊາຍ ແລະ ດິນດຳ.

1. ຈຸດ ຫຼື ພື້ນທີ່ຫີນແຮ່,ຊາຍ ແລະ ດິນດຳທີ່ໄດ້ຮັບອະນຸຍາດຕ້ອງຢູ່ໃນເຂດນ້ຳແດນດິນຂອງ ສປປ ລາວ ແລະ ຕ້ອງໃຫ້ຢູ່ຫ່າງຈາກບໍລິເວນຕ່າງໆດັ່ງນີ້:

1.1 ສຳລັບແມ່ນ້ຳຂອງ: ຕ້ອງຫ່າງຈາກຫົວດອນ ແລະ ຫາງດອນບໍ່ໃຫ້ຫຼຸດ 1,000 ມ, ສ່ວນກາງດອນ ແລະ ຕາຝັ່ງ ບໍ່ໃຫ້ຫຼຸດ 100ມ ແລະ ບໍ່ເກີນ1/4 ຂອງຄວາມກ້ວາງແມ່ນ້ຳ.

1.2 ສຳລັບນ້ຳສາຂາ ແລະ ແມ່ນ້ຳອື່ນໆ ຫ່າງຈາກຫົວດອນ ແລະ ຫາງດອນບໍ່ໃຫ້ຫຼຸດ 500 ມ, ສ່ວນກາງດອນ ແລະ ຕາຝັ່ງ ບໍ່ໃຫ້ຫຼຸດ 2/5 ຂອງຄວາມກ້ວາງແມ່ນ້ຳ.

1.3ເນື້ອທີ່ບໍ່ເກີນ 1/4ຂອງເນື້ອທີ່ທັງໝົດ, ສ່ວນຄວາມເລິກສຳລັບຊາຍ ບໍ່ເກີນ 2ມ, ຫີນແຮ່ ບໍ່ເກີນ 10ມ ແລະດິນດຳບໍ່ເກີນ 3ມ.

## ມາດຕາ 6: ລະບຽບການລວມກ່ຽວກັບການຂຸດຄົ້ນ.

ການຂຸດຄົ້ນຫີນແຮ່,ຊາຍດິນດຳ ຕ້ອງດຳເນີນການໃນເວລາແຕ່ 6:00ມ ຫາ 18:00ມ ໃນແຕ່ລະວັນຂອງເດືອນພະຈິກ ຫາ ເດືອນມິຖຸນາ
ຖ້າຈະຂຸດຄົ້ນນອກເວລາ ແລະ ລະດູການ ຕ້ອງໄດ້ຂຽນໃບສະເໜີຕາມລະບຽບການ

## ມາດຕາ 7: ການກຳນົດຈຸດ ຫຼືຂອບເຂດພື້ນທີ່.

ກົມ ກຂບນ ລົງສຳຫຼວດເກັບກຳຂໍ້ມູນ ແລະ ແຕ້ມແຜ່ນພຽງ ເພື່ອກຳນົດຈຸດ ຂອບເຂດ ແລະ ເນື້ອທີ່ຂອງການຂຸດຄົ້ນ ໂດຍສົມທົບກັບພະແນກ ຍທຂ ແຂວງ/ນະຄອນຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງຕາມມາດຕາ 8 ແລະ 11 ຂອງ ລະບຽບການທີ່ໄດ້ກຳນົດໄວ້.

## ມາດຕາ 14: ເງື່ອນໄຂຂອງຜູ້ປະກອບການ ທີ່ຈະໄດ້ຮັບອະນຸຍາດ ທາງດ້ານວິຊານຂຸດຄົ້ນ.

ມີສະຖານທີ່ເກັບມ້ຽນທີ່ເໝາະສົມ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ:

1) ສະທີ່ເກັບມ້ຽນຫີນແຮ່,ຊາຍ
- ຫ່າງຈາກເສັ້ນທາງຫຼວງແຫ່ງຊາດ ຢ່າງນ້ອຍ 50 ມ ຂຶ້ນໄປ;
- ຫ່າງຈາກເສັ້ນທາງອື່ນໆ ຢ່າງນ້ອຍ 30 ມ ຂຶ້ນໄປ;
- ຫ່າງຈາກບ້ານ, ເຮືອນ ແລະ ສະຖານທີ່ຕ່າງໆຂອງປະຊາຊົນຢ່າງ ນ້ອຍ 500 ມ ຂຶ້ນໄປ;
- ຫ່າງຈາກໂຮງຮຽນ, ໂຮງໝໍ ແລະ ສະຖານທີ່ສຳຄັນທາງດ້ານສາດ ສະໜາ ຢ່າງນ້ອຍ 1,000 ມ ຂຶ້ນໄປ;

2) ເຕັກນິກເກັບມ້ຽນຫີນແຮ່,ຊາຍ.
- ສະຖານທີ່ເກັບມ້ຽນຫີນແຮ່,ຊາຍຕ້ອງບໍ່ໃຫ້ຢູ່ບ່ອນເປົ່າຫວ່າງ;
- ມີຮົ້ວອ້ອມ ແບບເປັນສິ່ງກັ້ງບັງ ເພື່ອບໍ່ໃຫ້ລົມພັດປິວໄປໃສ່ບ່ອນອື່ນ;
- ກອງຫີນແຮ່,ຊາຍຕ້ອງບໍ່ໃຫ້ສູງເກີນ 10 ມແລະຊາຍບໍ່ໃຫ້ເກີນ 5 ມ;
- ກໍລະນີສະຖານທີ່ເກັບມ້ຽນຫີນແຮ່,ຊາຍຫາກຢູ່ບ່ອນດຽວກັນ ຕ້ອງ ເອົາຫີນແຮ່ຢູ່ນອກ ແລະ ຊາຍຕ້ອງກອງໄວ້ຢູ່ເບື້ອງໃນ;

3) ການຂົນສົ່ງຫີນແຮ່,ຊາຍ ແລະ ດິນດຳ.
- ຕ້ອງຮັບຜິດຊອບສ້ອມແປງເສັ້ນທາງຂົນສົ່ງໃຫ້ຢູ່ໃນສະພາບດີ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
- ລົດຂົນສົ່ງຫີນແຮ່,ຊາຍ ຕ້ອງຮັບປະກັນບໍ່ໃຫ້ມີຂີ້ຕົມເປິະເປື້ອນຕິດຕີນລົດ ກ່ອນແລ່ນຜ່ານຕົວເມືອງ ທີ່ເປັນເສັ້ນທາງປູຢາງ ແລະ ປູເບຕົງ;
- ລົດຂົນສົ່ງຫີນແຮ່,ຊາຍ ຕ້ອງມີຜ້າບັດປົກຄຸມຢ່າງແໜ້ນໜາຮັບປະກັນບໍ່ໃຫ້ຕົກເຮ່ຍ ການຂົນສົ່ງຕ້ອງປະຕິບັດຕາມລະບຽບການຂົນສົ່ງແຫ່ງຊາດຢ່າງເຂັ້ມງວດ;

ມາດຕາ 16: ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບອານຸຍາດໃນການຂຸດຄົ້ນ
- ຫ້າມເອົາໃບອະນຸຍາດຂອງຕົນໃຫ້ຜູ້ອື່ນນຳໃຊ້.

ມາດຕາ 18: ມາດຕະການຕໍ່ຜູ້ລະເມີດ
ການສຶກສາອົບຮົມ, ຕັກເຕືອນ, ປັບໃໝ ຫຼືລົງໂທດທາງອາຍາຕາມກໍລະນີໜັກຫຼືເບົາລວມທັງໃຊ້ແທນຄ່າເສຍຫາຍທີ່ໄດ້ກໍ່ຂຶ້ນ.

## III. ການປະກອບເອກະສານ

ຜູ້ຂໍອະນຸຍາດ ຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ ຕ້ອງໄດ້ປະກອບເອກະສານ

1. ໃບສະເໜີຂໍອະນຸຍາດຂຸດຄົ້ນຫີນແຮ່-ຊາຍ ແລະ ດິນດຳ;
2. ໃບຢັ້ງຢືນທີ່ຢູ່ ແລະ ປະຫວັດຫຍໍ້;
3. ໃບທະບຽນວິສາຫະກິດ;
4. ໃບທະບຽນອາກອນ;
5. ບັນຊີພາຫະນະ, ອຸປະກອນ;
6. ບັນຊີລາຍຊື່ພະນັກງານ;
7. ແບບຟອມທາງດ້ານເຕັກນິກການຂຸດຄົ້ນ;
8. ໃບຢັ້ງຢືນການກວດກາແຮ່ທາດ;
9. ໃບອະນຸຍາດທາງດ້ານເຕັກນິກ;
10. ໃບຢັ້ງຢືນດ້ານສິ່ງແວດລ້ອມ;
11. ໃບອະນຸຍາດຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ;
12. ສັນຍາການຂຸດຄົ້ນຫີນແຮ່,ຊາຍ ແລະ ດິນດຳລະຫວ່າງຜູ້ປະການກັບຂະແໜງການຂອງລັດ;
13. ສຳລັບສືບຕໍ່ຂຸດຄົ້ນໃນແຕ່ລະປີ ຕ້ອງໄດ້ມີບົດສະຫຼຸບບໍລິມາດ ແລະ ການປະຕິບັດພັນທະຕ່າງໆ.



ຂໍຂອບໃຈ